HAIBIN. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 2. Apr – Jun 2023. Page 41 – 49

# ການຄົງຢູ່ຂອງຄຳສຸພາສິດໃນສັງຄົມລາວປັດຈຸບັນ

**ຊູ ຫາຍບິນ***

*ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:** ຊູຫາຍບິນ, ສາຂາວັນນະຄະດີ ພາກວິຊາພາສາ-ວັດທະນະທຳລາວ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ. ເບີໂທ: +856 20 22523919, ອີເມວ: 958178121@qq.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 12 ມັງກອນ 2023*
*ການປັບປຸງ: 02 ເມສາ 2023*
*ການຕອບຮັບ: 28 ເມສາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າຮູບແບບການຄົງຢູ່ຂອງສຸພາສິດໃນສັງຄົມລາວປັດຈຸບັນ ໂດຍມີຈຸດປະສົງວິເຄາະຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ. ການສຶກສາໄດ້ອີງໃສ່ ທິດສະດີຮູບແບບການເຜີຍແຜ່ສຸພາສິດພື້ນ ເມືອງ ຂອງ ເຫີຈື້ຣັ້ນ (2014:11) ມາເປັນແນວທາງໃນການວິເຄາະ ຜົນການສຶກສາພົບດັ່ງນີ້:

ຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ພົບ 4 ຮູບແບບຄື ແບບຂຽນຄຳສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບລາຍເສັ້ນ, ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ. ໃນນັ້ນ, ແບບຂຽນຄຳສຸພາສິດປະກອບຮູບພາບ ພົບແບບເຜີຍແຜ່ສຸພາສິດດ້ວຍການປະກອບຮູບພາບປຽບທຽບ; ແບບສຸພາສິດປະກອບຮູບພາບ ພົບການເຜີຍແຜ່ຮູບແບບຄຳສຸພາສິປະກອບຮູບພາບປຽບທຽບທີ່ເປັນຄະຕິເຕືອນໃຈໃນການດຳລົງຊີວິດ; ແບບສຸພາສິດປະກອບລາຍເສັ້ນ ພົບແບບເຜີຍແຜ່ດ້ວຍຮູບພາບລາຍເສັ້ນຊ່ວຍເສີມສ້າງພັດທະນາການທາງມັນສະໝອງຂອງເດັກ; ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ ພົບຮູບແບບນຳສະເໜີດ້ວຍການຕີຄວາມຄຳສຸພາສິດ ທີ່ເປັນຄໍລຳບົດຄຳສຸພາສິດໃນໜ້າໜັງສືພິມ.

**ຄຳສັບສຳຄັນ**: *ການຄົງຢູ່, ຄຳສຸພາສິດ, ສັງຄົມລາວ,ປັດຈຸບັນ*

# The Existence of Lao Proverbs in Lao Modern Society

**SU HAIBIN***

*Faculty of Letters, National University of Laos, Lao PDR*

[1] ***Correspondence:** Lao Literature, Department of Lao Language and Culture, Faculty of Letters, National University of Laos, Tel: +856 20 22523919, Email: 958178121@qq.com*

***Article Info:***
*Submitted: Jan 12, 2023*
*Revised: Apr 02, 2023*
*Accepted: Apr 28, 2023*

**Abstract**

Researching the persistence of proverbs in current Lao society, which has two objectives: to analyze the distribution of proverbs in current Lao society and the presentation of proverbs in current textbooks. The study is based on the theory of traditional proverb dissemination style of He Chi Ran (2014:11) as a guide to analyze the study results as follows:

There are 4 ways of publishing proverbs in Lao society today: written proverbs with pictures, proverbs with pictures, proverbs with lines, proverbs with interpretations. Among them, proverbs written with pictures and proverbs published with comparative pictures; Proverb style with pictures Found to publish proverbs with picture metaphors that are reminders in living; Proverbs with line drawing. Find a published model with line drawing to help improve children's cognitive development; the style of publication with the interpretation of proverbs. The style of presentation with the interpretation of proverbs is a column of proverbs on the newspaper page.

**Keywords:** *Existence, Proverbs, Lao modern, Society*

## 1. ພາກສະເໜີ

ການດຳລົງຊີວິດຢູ່ໃນສັງຄົມ, ຄົນເຮົານອກຈາກມີຄວາມທີ່ຢູ່ອາໄສ, ອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ເຊິ່ງເປັນປັດໄຈ 4 ແລ້ວຍັງມີຄວາມຕ້ອງການສຶກສາອົບຮົມແນວຄິດຂອງຄົນໃຫ້ເປັນຄົນດີ, ມີແບບແຜນການດຳລົງຊີວິດທີ່ຖືກຕ້ອງ. ຄຳສຸພາສິດ ແມ່ນພູມປັນຍາຂອງບັນພະບູລຸດຮຸ່ນຄົນໜຶ່ງສູ່ຮຸ່ນຄົນໜຶ່ງໄດ້ນຳເອົາຄວາມຮູ້, ປະສົບການຈາກຊີວິດຕົວຈິງໃນສັງຄົມມາປະດິດແຕ່ງເປັນຄຳເວົ້າທີ່ຈົບງາມ ແລະ ມີຄວາມໝາຍເລິກເຊິ່ງ ເພື່ອສັ່ງສອນລູກຫຼານ. ການເລົ່າປາກຕໍ່ປາກແມ່ນຮູບການຄົງຕົວ ແລະ ຂະຫຍາຍຕົວຂອງຄຳສຸພາສິດ ຕັ້ງແຕ່ກ່ອນມາເຖິງປັດຈຸບັນ. ປັດຈຸບັນນີ້ ພາສິດຍັງໄດ້ຮັບການຈົດກ່າຍຖ່າຍທອດດ້ວຍຫຼາຍຮູບແບບ ໂດຍສະເພາະແມ່ນໄດ້ຮັບການຖ່າຍທອດເປັນລາຍລັກອັກສອນ ເຊິ່ງປາກົດໃຫ້ເຫັນຢູ່ໃນປຶ້ມແບບຮຽນ, ປຶ້ມອ່ານທົ່ວໄປ ແລະ ຮູບແບບການສື່ສານຕ່າງໆໃນສັງຄົມລາວ.

ໃນປຶ້ມແບບຮຽນວັນນະຄະດີພື້ນເມືອງລາວ ເພິ່ນໄດ້ນຳເອົາຄຳສຸພາສິດມາເປັນເນື້ອໃນຂອງແບບຮຽນ ເຊັ່ນ ປຶ້ມແບບຮຽນວັນນະຄະດີຊັ້ນມັດທະຍົມປີທີ 1 ຂອງ Khamphouy Phonluexa & Phuangseng Keokhounborisak (2010) ແລະ ວັນນະຄະດີຊັ້ນມັດທະຍົມປີທີ 5 ຂອງ Bounlome Sibounhueng (2014); Lao Traditional Subject by Khamhoung Sengmany (2004). ການບັນຈຸຄຳສຸພາສິດບໍ່ສະເພາະເຫັນແຕ່ໃນຫຼັກສູດການຮຽນ-ການສອນເທົ່ານັ້ນ ຍັງມີຄຳສຸພາສິດທີ່ເປັນປຶ້ມອ່ານທົ່ວໄປທີ່ພິມອອກຮັບໃຊ້ແກ່ສັງຄົມລາວ ເຊັ່ນ ສຸພາສິດລາວບູຮານ ໂດຍ Mahashila Vilavongs (1996), ສຸພາສິດໂບຮານ ພ້ອມການອະທິບາຍຄວາມໝາຍ ແລະ ຮູບພາບປະກອບຂອງ Phuangsaba (1994), Kideng Phonekaseumsouk (2015), ນິທານພື້ນເມືອງລາວ ເປັນຕົ້ນ.

ວັນນະຄະດີປະເພດຄຳສຸພາສິດລາວເປັນມູນມໍລະດົກອັນລ້ຳຄ່າ ທີ່ປູ່ຍ່າຕາຍາຍລາວປະໄວ້ໃຫ້ລູກຫຼານຜູ້ເກີດໃໝ່ໃຫຍ່ລຸນໄດ້ສືບທອດ. ການສຶກສາຮ່ຳຮຽນໃນຫຼັກສູດການຮຽນ-ການສອນໃນລະດັບມັດທະຍົມສຶກສາ ແລະ ດັບມະຫາວິທະຍາໄລໄດ້ວິເຄາະໃຫ້ເຫັນເນື້ອໃນຄວາມໝາຍທີ່ເປັນຄະຕິສອນໃຈຫຼາຍໆເລື່ອງຫຼາຍບັນຫາເຊັ່ນການຕໍ່ສູ້ດັດແປງທຳມະຊາດ, ການດຳລົງຊີວິດປະຈຳວັນ, ການພົວພັນລະຫວ່າງຄົນກັບຄົນໃນສັງຄົມ, ການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ການອອກແຮງງານ ເປັນຕົ້ນ. ບັນດາເນື້ອໃນຂອງຄຳສຸພາສິດດັ່ງກ່າວນັ້ນໄດ້ມີການເຜີຍແຜ່ຫຼາຍຮູບແບບເຊັ່ນ: ເຜີຍແຜ່ການຕີພິມລົງໃນໜັງສືພິມ, ວາລະສານ, ປຶ້ມອ່ານທົ່ວໄປ, ປຶ້ມອ່ານສຳລັບເດັກ ແລະ ເຜີຍແຜ່ທາງອອນລາຍເຊັ່ນ: ໂທລະພາບ, ວິທະຍຸ, ເຟສບຸກຕ່າງໆ ເພື່ອສັ່ງສອນຄົນໃນສັງຄົມລາວໃນປັດຈຸບັນ. ຍ້ອນໄດ້ຮັບການນຳມາເຜີຍແຜ່ດ້ວຍຮູບແບບຕ່າງໆທີ່ກ່າວມານັ້ນເຮັດໃຫ້ຄຳສຸພາສິດລາວຍັງຄົງຕົວຢ່າງມີຊີວິດຊີວາຢູ່ໃນສັງຄົມລາວປັດຈຸບັນ. (ເນື້ອໃນວັກນີ້ ໃຫ້ໃສ່ອ້າງອີງເອກະສານ ວ່າເອົາມາຈາກແຫຼ່ງໃດ).

ໃນໄລຍະຜ່ານມາໄດ້ມີຄົ້ນຄວ້າຫຼາຍທ່ານໃຫ້ຄວາມສົນໃຈສຶກສາຄຳສຸພາສິດທີ່ແຕກຕ່າງກັນເຊັ່ນ Phoutsadee Chathasone (2011) ໄດ້ວິເຄາະຄຳສຸພາສິດລາວທີ່ມີເນື້ອໃນສອນຍິງ; Souk Khuonpasert (2012) ໄດ້ວິເຄາະຄວາມໝາຍຂອງຄຳສຸພາສິດ. Kanlaya Souksavath (2015) ໄດ້ວິເຄາະສຸພາສິດເກົາຫຼີທີ່ມີຄວາມໝາຍສອດຄ່ອງກັບຄຳສຸພາສິດລາວ. Khaophone Xayyalath (2015) ໄດ້ປຽບທຽບຄວາມແຕກຕ່າງດ້ານເນື້ອໃນຄຳສຸພາສິດ ແລະ ຄຳຜະຫຍາ. Vanhnalin Soukluexay (2015) ໄດ້ວິເຄາະສຳນວນສຸພາສິດລາວ ແລະ ຫວຽດນາມ. Li Ling ling (2014) ໄດ້ສຶກສາຄຳສຸພາສິດພື້ນເມືອງຈີນ. ຈາກສະພາບຄວາມເປັນມາດັ່ງກ່າວນັ້ນ ຜູ້ສຶກສາຈຶ່ງມີຄວາມສົນໃຈຄົ້ນຄວ້າໃນຫົວຂໍ້ການຄົງຢູ່ຂອງຄຳສຸພາສິດໃນສັງຄົມລາວປັດຈຸບັນ ໂດຍມີຈຸດປະສົງວິເຄາະຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ເປັນການສຶກສາທາງຄຸນະພາບທີ່ໄດ້ຈາກການອ່ານ, ວິເຄາະ, ໄຈ້ແຍກ ແລະ ວິທີການດຳເນີນການຄົ້ນຄວ້າດັ່ງນີ້:

### 2.1 ການຄັດເລືອກພື້ນທີ່

ການສຶກສາຄັ້ງນີ້ ແມ່ນການສຶກສາອ່ານເອກະສານຕ່າງໆ ຄື 1. ປຶ້ມແບບຮຽນວັນນະຄະດີຊັ້ນມັດທະຍົມປີທີ 1, (2010:29-53) ແລະ ປຶ້ມແບບຮຽນວັນນະຄະດີຊັ້ນມັດທະຍົມປີທີ 5 (2014:123-138) ; 2. ປຶ້ມອ່ານທົ່ວໄປ ຄື 1) ສຸພາສິດລາວບູຮານ ຂອງ Mahashila Vilavongs (1996/2000); 3) ສຸພາສິດໂບຮານ ຂອງ Phuangsaba (1994); 4) ນິທານພື້ນເມືອງລາວຂອງແຂວງສະຫວັນນະເຂດ ຂອງ Sangthong Latthasing (2011); 5) ປະຫວັດສາດ-ວັນນະຄະດີ ຂອງ Mahabounmee Thepsimueng (2017); 6) ຜະຫຍາພາສິດ ແລະ ຄຳໂຕ່ງໂຕ່ຍ ຂອງ ດວງຈັນ ວັນນະບຸບຜາ (1991); 7) ສຸພາສິດບູຮານລາວ ແລະ ໄຂສຳນວນ ຂອງ Chanh Inthouphilas (1986); 8) ສຸພາສິດພື້ນເມືອງລາວ ຂອງ Ounla Santi (2007); 9) ນິທານພື້ນເມືອງລາວເຫຼັ້ມ 2 ຂອງ Kideng Phonekasuemsouk (2015); 10) ສຽວສະຫວາດ ຂອງ ກົມມັດທະຍົມສຶກສາກະຊວງສຶກສາທິການ (1973); 11) ນິທານອີສົບ ຂອງ ສຳນັກພິມ ມິດີບຸກສ໌ (2012); 12) ໜັງສືພິມ ເຊັ່ນ ໜັງສືພິມວຽງຈັນໃໝ່ລາຍວັນ (2020) ແລະ ໜັງສືພິມວັນນະສິນລາຍເດືອນ (2007-2010); 13) ໂທລະພາບ ເຊັ່ນ ໂທລະພາບລາວສະຕ່າ ແລະ ໂທລະພາບ ປກສ.

### 2.2 ວິທີການ

#### 2.2.1 ການຄັດເລືອກປະຊາກອນ

ເນື່ອງຈາກການສຶກສາເປັນການສຶກສາທາງຄຸນນະພາບ. ດັ່ງນັ້ນ, ການຄັດເລືອກກຸ່ມປະຊາກອນທີ່ນຳມາວິເຄາະໄດ້ອີງໃສ່ບົດເລື່ອງ ແລະ ເນື້ອໃນຂອງເລື່ອງທີ່ສະແດງອອກກົງກັບຈຸດປະສົງ ແລະ ຂອບເຂດແນວຄິດ. ການຄັດເລືອກປະຊາກອນ ຜູ້ສຶກສາໄດ້ນຳໃຊ້ເກນແບບເຈາະຈົງ ຂອງ Varo Phengsawat (2018) Refered at Phimpho Luanglard with the board, 2016:62). ດັ່ງນັ້ນ, ການຄັດເລືອກປະຊາກອນ ຈຶ່ງເປັນຂໍ້ຄວາມທີ່ປາກົດໃນປຶ້ມສຸພາສິດຕ່າງໆທີ່ກຳນົດໄວ້. ການຄັດເລືອກປະຊາກອນໄດ້ອີງໃສ່ຕົວແປພື້ນທີ່ໄດ້ມາຈາກແນວຄິດທິດສະດີເພື່ອກຳນົດປະຊາກອນ. ເພາະສະນັ້ນເອກະສານທົ່ວດຽວສາມາດຄັດເລືອກຄຳສຸພາສິດທີ່ເປັນປະຊາກອນຕາມຈຸດປະສົງໄດ້ສອງເທື່ອ ເຊັ່ນ ປຶ້ມແບບຮຽນວັນນະຄະດີປີທີ 1 ແລະ ປີທີ 5, ສາມາດກຳນົດປະກອນຕາມຈຸດປະສົງຄືການຄັດເລືອກປະຊາກອນໃນຮູບແບບເຜີຍແຜ່ໃນປຶ້ມແບບຮຽນ. ຕົວຢ່າງການຄັດເລືອກປະຊາກອນດັ່ງຕາຕະລາງລຸ່ມນີ້:

| ຮູບແບບເຜີຍແຜ່ຄຳສຸພາສິດ | ປະຊາກອນຕົວຈິງ | ປະຊາກອນທີ່ຄັດເລືອກ |
|---|---|---|
| 1) ຮູບແບບເຜີຍແຜ່ຄຳສຸພາສິດໃນນິທານ | 160 | 150 |
| 2) ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນ | 172 | 168 |
| 3) ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມສຸພາສິດຕ່າງໆ | 217 | 197 |
| 4) ຮູບແບບເຜີຍແຜ່ສຸພາສິດໃນປຶ້ມອ່ານສຳລັບເດັກ | 40 | 34 |
| 5) ຮູບແບບເຜີຍແຜ່ສຸພາສິດດ້ວຍໜັງສືພິມ | 18 | 14 |
| 6) ຮູບແບບເຜີຍແຜ່ຄຳສຸພາສິດທາງໂທລະພາບ | 9 | 9 |
| ລວມ | 726 | 657 |

#### 2.2.2 ການກຳນົດກຸ່ມຕົວຢ່າງ

ການສຶກສາຄັ້ງນີ້ເປັນການສຶກສາທາງຄຸນນະພາບ ໂດຍມີຈຸດປະສົງວິເຄາະຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ. ດັ່ງນັ້ນ, ການກຳນົດກຸ່ມປະຊາກອນຕົວຢ່າງແມ່ນໄດ້ອີງໃສ່ ຈຸດປະສົງຂອງການວິເຄາະ ແມ່ນວິເຄາະຕົວປ່ຽນອິດສະຫຼະ. ສະນັ້ນ,ປະຊາກອນທີ່ຈະຍົກມາວິເຄາະເປັນຕົວຢ່າງແມ່ນສຳນວນຂໍ້ຄວາມ. ໂດຍກຳນົດບໍ່ໃຫ້ຫຼຸດ 2 ສຸພາສິດ ແລະ ບໍ່ກາຍ 2 ສຸພາສິດເດັດຂາດ. ສະນັ້ນ, ປະຊາກອນກຸ່ມຕົວຢ່າງທີ່ເລືອກມາແມ່ນໄດ້ມາຈາກການສຸ່ມຕົວຢ່າງທີ່ເຫັນວ່າກົງກັບຕົວປ່ຽນຕາມນັ້ນທີ່ສຸດມາວິເຄາະເພື່ອພິສູດຕົວປ່ຽນອິດສະຫຼະ ແລະ ສ່ວນທີ່ເຫຼືອແມ່ນຈະໄດ້ເອົາໄວ້ໃນເອກະສານອ້າງອີງ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ຮູບແບບເຜີຍແຜ່ຄຳສຸພາສິດ | ປະຊາກອນຕົວຈິງ | ປະຊາກອນທີ່ຄັດເລືອກ |
|---|---|---|

| | | |
|---|---|---|
| 1) ຮູບແບບເຜີຍແຜ່ຄຳສຸພາສິດໃນນິທານ | 160 | 150 |
| 2) ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນ | 172 | 168 |
| 3) ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມສຸພາສິດຕ່າງໆ | 217 | 197 |
| 4) ຮູບແບບເຜີຍແຜ່ສຸພາສິດໃນປຶ້ມອ່ານສຳລັບເດັກ | 40 | 34 |
| 5) ຮູບແບບເຜີຍແຜ່ສຸພາສິດດ້ວຍໜັງສືພິມ | 18 | 14 |
| 6) ຮູບແບບເຜີຍແຜ່ຄຳສຸພາສິດທາງໂທລະພາບ | 9 | 9 |
| ລວມ | 726 | 657 |

### 2.4 ວິທີການວິເຄາະຂໍ້ມູນ

ການສຶກສາຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ຄັ້ງນີ້ ໄດ້ວິເຄາະຕາມແນວຄິດທິດສະດີຮູບແບບການພິມເຜີຍແຜ່ສຸພາສິດຂອງ Herjuehan (2014:11) ເຊິ່ງສາມາດວິເຄາະຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນອອກເປັນ 6 ຮູບແບບ ຄື ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມນິທານ, ປຶ້ມແບບຮຽນ, ປຶ້ມສຸພາສິດຕ່າງໆ, ປຶ້ມອ່ານສຳລັບເດັກ, ໃນໜັງສືພິມ ແລະ ຮູບແບບເຜີຍແຜ່ຄຳສຸພາສິດໃນໂທລະພາບ.

## 3. ຜົນໄດ້ຮັບ

### 3.1 ຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ

ການຄົ້ນຄວ້າຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນຜົນໄດ້ຮັບຈາກການສຶກສາພົບຮູບແບບຂຽນຄຳສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບລາຍເສັ້ນ, ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ. ລາຍລະອຽດຜົນການສຶກສາມີດັ່ງນີ້:

#### 3.1.1 ແບບຂຽນຄຳສຸພາສິດປະກອບຮູບພາບ

ຮູບພາບ ໝາຍເຖິງຮູບທີ່ແຕ້ມ ຫຼືລະບາຍສີຢູ່ເທິງພື້ນເຈ້ຍ; ຄວາມໝາຍນີ້ກົງກັບແນວຄິດ ຂອງ Southanya PRAVORAKOUN (1998) ທີ່ໄດ້ແບ່ງຄວາມໝາຍຂອງຮູບອອກເປັນ 2 ຮູບແບບຄືຮູບແບບທີ່ສະແດງອອກດ້ານຮູບພາບ (Physical Model) ແມ່ນເກີດຈາກຕົວຢ່າງ ຫຼືການ ຈຳລອງສິ່ງໃດສິ່ງໜຶ່ງເພື່ອພັດທະນາສິ່ງຕ່າງໆ, ຮູບແບບທີ່ໃຫ້ຄວາມຄິດຈາກວັດຖຸສິ່ງຂອງໃດໜຶ່ງ (Conceptual Modle) ທີ່ສ້າງຂຶ້ນຈາກທິດສະດີທີ່ມີຢູ່ແລ້ວເພື່ອນຳມາຈັດຕັ້ງປະຕິບັດໃຫ້ເກີດການຮຽນແບບ". ດັ່ງນັ້ນ, ແບບຂຽນຄຳສຸພາສິດປະກອບຮູບພາບຈຶ່ງໝາຍເຖິງຮູບພາບທີ່ປາກົດຂຶ້ນຢູ່ໃນປຶ້ມແບບຮຽນບໍ່ວ່າຈະເປັນຮູບຄົນ, ສັດ ແລະ ວັດຖຸສິ່ງຂອງຕ່າງໆ ເພື່ອມາອະທິບາຍປຽບທຽບໃຫ້ເກີດຄວາມເຂົ້າໃຈໃນຄວາມໝາຍຂອງຄຳສຸພາສິດ. ຈາກການສຶກສາຂໍ້ມູນພົບ ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນວັນນະຄະດີລາວຊັ້ນມັດທະຍົມປີທີ 1 ພົບແບບຂຽນຄຳສຸພາສິດປະກອບຮູບພາບ ໂດຍຍົກເອົາຄຳສຸພາສິດທີ່ມີຮູບພາບການປຽບທຽບທຽບວັດຖຸສິ່ງຂອງໃດໜຶ່ງປະກອບໃນປຶ້ມແບບຮຽນ ລາຍລະອຽດດັ່ງຄຳສຸພາສິດດັ່ງລຸ່ມນີ້:




ສຸພາສິດຂ້າງເທິງນີ້ສະແດງໃຫ້ເຫັນ ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນຊັ້ນມັດທະຍົມປີທີ 1 ໂດຍນຳໃຊ້ແບບຮູບພາບປະກອບເພື່ອເຂົ້າກັບຄຳສຸພາສິດທີ່ວ່າ "ໜູກັດຫູກ ຈຶ່ງຮູ້ຄຸນແມວ ລູກແຂວນແອວ ຈຶ່ງຮູ້ຄຸນພໍ່ແມ່". ໃນຮູບພາບປາກົດເຫັນແມ່ຍິງກຳລັງຕ່ຳຫູກ ແລະ ເຫັນແມວກິນໜູ ທີ່ຢູ່ໃນປຶ້ມແບບຮຽນຊັ້ນມັດທະຍົມປີທີ 1. ການກຳນົດເອົາພາບມາໄວ້ໃນປຶ້ມແບບຮຽນນີ້ສາມາດເຮັດໃຫ້ນັກຮຽນສຳນຶກໄດ້ວ່າເຄືອຫູກຫາກມີໜູມາກັດກໍນຶກໄດ້ເຖິງໂຕແມວ ເພາະວ່າ ແມວສາມາດຄາບໜູໃຫ້ຕາຍ ແລະ ເຄືອຫູກກໍຈະບໍ່ຂາດ. ສະນັ້ນ, ຮູບພາບທີ່ເຫັນ ຈຶ່ງໃຫ້ຄະຕິເຕືອນໃຈສອນໃຫ້ນັກຮຽນຮູ້ເລື່ອງຄວາມກະຕັນຍູຮູ້

ບຸນຄຸນຜູ້ໃຫ້ກຳເນີດຄື ພໍ່ແມ່, ເຖົ້າແກ່, ຄູ, ອາຈານເປັນຕົ້ນ. ດັ່ງນັ້ນ, ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນແບບປະກອບກັບຮູບພາບແມ່ຍິງກຳລັງຕຳຫູກ ແລະ ເຫັນແມວກິນໝູໃນປຶ້ມແບບຮຽນຊັ້ນມັດທະຍົມປີທີ 1 ແມ່ນໃຫ້ຄະຕິສອນໃຈເລື່ອງການຕອບແທນບຸນຄຸນຕໍ່ຜູ້ມີພະຄຸນໃຫ້ແກ່ຄົນເຮົາ. ນອກນັ້ນ, ການສຶກສາຍັງພົບຮູບພາບຊາຍຄວ່ງແຫໃນນໍ້າ ເພື່ອອະທິບາຍຄຳສຸພາສິດທີ່ວ່າ“ຢາກກິນເຂົ້າຕ້ອງເຮັດນາ ຢາກກິນປາຕ້ອງລົງນໍ້າ” ດັ່ງຮູບພາບປະກອບຄຳສຸພາສິດຕໍ່ໄປນີ້:




**ຮູບພາບທີ 1: ຮູບການຄວ່ງແຫ (ມ 1:35)**

ຈາກຕົວຢ່າງຂ້າງເທິງເຫັນວ່າ ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນຊັ້ນມັດທະຍົມປີທີ 1 ແມ່ນເຜີຍແຜ່ດ້ວຍການນຳໃຊ້ຮູບພາບປະກອບກັບຄຳສຸພາສິດ ກໍ່ເພື່ອໃຫ້ນັກຮຽນເຂົ້າໃຈກ່ຽວກັບເນື້ອໃນຂອງຄຳສຸພາສິດດ້ວຍຮູບພາບປະກອບ. ຄຳສຸພາສິດທີ່ວ່າ “ຢາກກິນເຂົ້າຕ້ອງເຮັດນາ ຢາກກິນປາຕ້ອງແບກແຫລົງນໍ້າ” ເພິ່ນໄດ້ນຳເອົາຮູບພາບຜູ້ຊາຍກຳລັງຄວ່ງແຫໃນແມ່ນໍ້າເພື່ອເອົາປາ ໂດຍມີຂ້ອງຕັ້ງໄວ້ຢູ່ແຄມນໍ້າ. ຮູບພາບດັ່ງກ່າວນີ້ຈຶ່ງເຮັດໃຫ້ນັກຮຽນໄດ້ເບິ່ງຮູບພາບແລ້ວສົມທຽບໃສ່ກັບເນື້ອໃນສຸພາສິດຈຶ່ງເປັນຄະຕິເຕືອນໃຈສອນໃຫ້ຮູ້ຄວາມດຸໝັ່ນໃນການທຳມາຫາກິນເພື່ອລ້ຽງຊີວິດ. ດັ່ງນັ້ນ, ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມແບບຮຽນຊັ້ນມັດທະຍົມປີທີ 1 ໃນສຸພາສິດນີ້ຍັງມີເນື້ອໃນ ສອນໃຫ້ຄົນເຮົາເປັນຄົນດຸໝັ່ນໃນການທຳມາຫາກິນ.

### 3.1.2 ແບບສຸພາສິດປະກອບຮູບພາບ

ເດັກນ້ອຍເປັນໄວທີ່ຮັບຮູ້ໄດ້ບໍ່ທັນເລິກເຊິ່ງຄືຜູ້ໃຫຍ່ ໂດຍສະເພາະຄຳສຸພາສິດທີ່ເຂົ້າໃຈຍາກທີ່ຕ້ອງໄດ້ຄົ້ນຄິດເປັນນາມມະທຳທີ່ເຮັດໃຫ້ເດັກບໍ່ເຂົ້າໃຈ. ດັ່ງນັ້ນ, ຜູ້ປະດິດຄິດແຕ່ງ ແລະ ເຜີຍແຜ່ສຸພາສິດຈຳເປັນຕ້ອງໄດ້ຄິດຫາແບບຕ່າງໆ ເພື່ອໃຫ້ເດັກໄດ້ເຂົ້າໃຈງ່າຍເວລາເຫັນແລ້ວກໍສາມາດເຂົ້າໃຈໂລດ ນັ້ນກໍແມ່ຮູບພາບ. ການມີຮູບພາບປະກອບຄຳສຸພາສິດ ຈະຊ່ວຍໃຫ້ເດັກນ້ອຍເຂົ້າໃຈໄດ້ດີ ກວ່າການອະທິບາຍທຳມະດາທົ່ວໄປ, ຊ່ວຍໃຫ້ເຂົ້າໃຈໃນສິ່ງທີ່ອ່ານສົມບູນຍິ່ງຂຶ້ນ ພ້ອມທັງເປັນການຈຳລອງຄວາມເປັນຈິງມາໃຫ້ເດັກນ້ອຍໄດ້ສຶກສາຮຽນຮູ້. ດັ່ງຄຳສຸພາສິດຈີນໄດ້ເວົ້າວ່າ “ພາບພຽງພາບດຽວ ດີກວ່າຄຳເວົ້າພັນຄຳ” (Boutsarakone Somboun, 2001). ດັ່ງນັ້ນ, ຄຳສຸພາສິດທີ່ມີຮູບພາບປະກອບຊ່ວຍໃຫ້ເດັກນ້ອຍເຂົ້າໃຈຫຼາຍຂຶ້ນ ພຽງແຕ່ເບິ່ງຮູບກໍສາມາດເຂົ້າໃຈໄດ້. ການສຶກສາຄັ້ງນີ້ຈະຍົກຄຳສຸພາສິດປະກອບຮູບພາບດັ່ງຕໍ່ໄປນີ້:




“ນົກເຄົ້າທ້ວງຕາແມ່”

**ຮູບພາບທີ 3: ຮູບນົກປະກອບຄຳສຸພາສິດ (ຕ.ຈ:1)**

ຈາກຄຳສຸພາສິດຂ້າງເທິງນີ້ເຫັນໄດ້ເຖິງ ຮູບແບບເຜີຍແຜ່ຄຳສຸພາສິດປຶ້ມອ່ານສຳລັບເດັກ ຈາກປຶ້ມສຸພາສິດເຕືອນໃຈ ຂອງ ພ. ພວງສະບາ ແມ່ນນຳໃຊ້ຮູບພາບປະກອບເພື່ອໃຫ້ເຂົ້າກັບຄຳສຸພາສິດທີ່ວ່າ “ນົກເຄົ້າທ້ວງຕາແມ່”. ໃນຮູບພາບນີ້ປາກົດເຫັນນົກເຄົ້າສອງໂຕກຳລັງຈັບງ່າໄມ້ ແລະ ມີນົກເຄົ້າຕົວຮ້ອງຂຶ້ນຢູ່ໃນຮູບພາບປຶ້ມສຸພາສິດເຕືອນໃຈ ຈຶ່ງສາມາດເຮັດໃຫ້ເດັກໄດ້ເຫັນຄຳສຸພາສິດທີ່ມີ

ຮູບພາບນີ້ສຳນຶກໄດ້ວ່າ ນົກທັງສອງຄືກັນ ແຕ່ທັກທ້ວງ ຫຼືຕຳນິຕິວິຈານກັນທັງຕົວເອງກໍຄືກັນອ້ອຍຕ້ອຍ. ສະນັ້ນ, ຮູບແບບເຜີຍແຜ່ຄຳສຸພາສິດແບບປະກອບພາບນົກເຄົ້າສອງໂຕຄືກັນຈັບງ່າຍໄມ້ດຽວກັນ ໃຫ້ຄະຕິສອນໃຈວ່າ ເມື່ອຄິດຈະຕິຄົນອື່ນຄວນເບິ່ງຕົນເອງກ່ອນ. ນອກນັ້ນຍັງພົບເຫັນຮູບພາບຊາຍທ້ອງໃຫ່ຍຄົນໜຶ່ງ ດັ່ງຄຳສຸພາສິດຕໍ່ໄປນີ້:

"ກິນມ່ຳໆ ບໍ່ຄຳເບິ່ງທ້ອງ"




**ຮູບພາບທີ 2: ຮູບຄົນປະກອບຄຳສຸພາສິດ (ຕ.ຈ:2)**

ຈາກຄຳສຸພາສິດຂ້າງເທິງນີ້ເຫັນໄດ້ເຖິງ ຮູບແບບເຜີຍແຜ່ຄຳສຸພາສິດໃນປຶ້ມສຸພາສິດເຕືອນໃຈ ແມ່ນນຳໃຊ້ຮູບພາບປະກອບເພື່ອໃຫ້ເຂົ້າກັບຄຳສຸພາສິດທີ່ວ່າ "ກິນມ່ຳໆ ບໍ່ຄຳເບິ່ງທ້ອງ". ໃນຮູບພາບນີ້ປາກົດເຫັນຊາຍຄົນໜຶ່ງກິນອາຫານຫຼາຍຢ່າງຈົນທ້ອງໃຫ່ຍບໍ່ສາມາດເອົາເສື້ອລົງໄດ້ ແລະມີຄຳອະທິບາຍຊ່ວຍ. ເມື່ອເດັກນ້ອຍເຫັນຮູບພາບຊາຍຢູ່ໃນປຶ້ມແລ້ວຈຶ່ງໄດ້ຄະຕິສອນໃຈວ່າ ຄົນເຮົາບໍ່ຄວນໂລບມາກຫຼາຍຈົນເກີນໄປ ຈະເຮັດໃຫ້ເກີດມີຜົນເສຍຕາມມາ ແລະ ມີຜົນກະທົບຕໍ່ຕົນເອງ ອາດເວົ້າໄດ້ວ່າການເຜີຍແຜ່ສຸພາສິດແບບຮູບພາບປະກອບນີ້ເຮັດໃຫ້ຜູ້ຮຽນເຂົ້າໃຈໄດ້ດີກວ່າປຶ້ມສຸພາສິດທີບໍ່ມີຮູບພາບປະກອບ.

### 3.1.3 ແບບສຸພາສິດປະກອບລາຍເສັ້ນ

ລາຍເສັ້ນ ໝາຍເຖິງ ການໃຊ້ວັດສະດຸສຳເລັດຮູບເຊັ່ນ ສໍດຳ, ປາກກາ ສ້າງສັນງານໃຫ້ເກີດລາຍເສັ້ນ ຫຼືພາບແຮເງົາ ໂດຍເນັ້ນຄວາມງາມຂອງເສັ້ນ ແລະ ແສງເງົາເປັນສຳຄັນ. ດັ່ງນັ້ນ,ຮູບແບບສຸພາສິດປະກອບລາຍເສັ້ນ ແມ່ນການເຜີຍແຜ່ຄຳສຸພາສິດດ້ວຍການແຕ້ມຮູບພາບປະກອບລາຍເສັ້ນ ຫຼືຮູບພາບທີ່ເປັນຮູບກະຕຸນລາຍບາຍສີສຳລັບເດັກ ເຊິ່ງແຕ່ລະຮູບໃຫ້ຄະຕິເຕືອນໃຈສອນຄົນເລື່ອງສັງຄົມ, ການຕໍ່ສູ້ ແລະ ການອອກແຮງງານເປັນຕົ້ນ. ເພື່ອໃນເວລາເດັກຮຽນແລ້ວຈະເສີມພັດທະນາການ ແລະ ເປັນກິດຈະກຳໃນການຮຽນຂອງເດັກຄືການທີ່ເດັກສາມາລາບາຍສີໃສ່ໄດ້ຕາມສຸພາສິດທີ່ມີຮູບພາບຕ່າງໆ. ການສຶກສາຄັ້ງນີ້ພົບແບບການເຜີຍເຜີຄຳສຸພາສິດປະກອບລາຍເສັ້ນ ໃນປຶ້ມລະບາຍສີຄຳສຸພາສິດພື້ນເມືອງລາວ ຂອງ ອຸ່ນຫຼ້າ ສັນຕິ. ແຕ່ລະພາສິດຈະມີຮູບພາບລາຍເສັ້ນປະກອບເພື່ອໃຫ້ເດັກນ້ອຍຜູ້ທີ່ອ່ານເຫັນພາບ, ສາມາດລະບາຍສີ ແລະ ເຂົ້າໃຈຄວາມໝາຍຂອງພາສິດໄດ້ງ່າຍຂຶ້ນ ເຊິ່ງຜູ້ສຶກສາຈະນຳເອົາຮູບແບບການເຜີຍແຜ່ສຸພາສິດປະກອບລາຍເສັ້ນ ສະແດງອອກໃນປຶ້ມມາສະເໜີດັ່ງຕໍ່ໄປນີ້:

"ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ"



**ຮູບພາບທີ 4: ຮູບລາຍເສັ້ນປະກອບຄຳສຸພາສິດ (ຄ.ລ: 10)**

ຈາກສຸພາສິດຂ້າງເທິງນັ້ນສະແດງໃຫ້ເຫັນເຖິງ ແບບເຜີຍແຜ່ຄຳສຸພາສິດປະກອບລາຍເສັ້ນສຳຫຼັບເດັກ. ໃນຮູບພາບປາກົດເຫັນໄກ່ບໍ່ມີຂົນຕົວໜຶ່ງກຳລັງອາຍໄກ່ສອງຕົວທີ່ມີຂົນງາມເບິ່ງຕົນເອງຢູ່ ເຊິ່ງຮູບພາບດັ່ງກ່າວນີ້ເຫັນຄຳສຸພາສິດທີ່ວ່າ "ໄກ່ງາມຍ້ອນຂົນ ຂົນງາມຍ້ອນແຕ່ງ". ຄຳສຸພາສິດມີເນື້ອໃນເວົ້າເຖິງຄວາມງາມເປັນສິ່ງທີ່ທຸກຄົນມັກ ແລະ ຕ້ອງການ ການນຸ່ງຖືແຕ່ງຕົວກໍເປັນສ່ວນໜຶ່ງທີ່ຊ່ວຍໃຫ້ຄົນເຮົາເບິ່ງງາມຂຶ້ນ. ເມື່ອສັງເກດຮູບແບບເຜີຍແຜ່ຄຳສຸພາສິດໃນຮູບພາບນີ້ມີການເຜີຍແຜ່ດ້ວຍຮູບພາບລາຍເສັ້ນຊ່ວຍເສີມສ້າງພັດທະນາການສະໝອງຂອງເດັກໃນການຈິນຕະນາການ ແລະ ເປັນການສ້າງກິດຈະກຳຢ່າງໜຶ່ງໃຫ້ກັບການຮຽນຂອງເດັກ ຄື ໄດ້ລະບາຍສີໃສ່ຮູບຕ່າງໆທີ່ປະກອບໃນຄຳສຸພາສິດນັ້ນແລ້ວຍັງໃຫ້ຄະຕິສອນໃຈໃຫ້ແກ່ເດັກອີກດ້ວຍຈຶ່ງເຮັດໃຫ້ເດັກຈົດຈຳຄຳສຸພາສິດຕະຫຼອດໄປ. ດັ່ງນັ້ນ, ແບບເຜີຍແຜ່ຄຳສຸພາສິດໃນຮູບພາບລາຍເສັ້ນສະຫຼຸບໄດ້ວ່າເປັນຄະຕິສອນໃຫ້ຄົນເຮົາຮູ້ຈັກການແຕ່ງຕົວເພາະການແຕ່ງໂຕກໍເປັນສ່ວນໜຶ່ງທີ່ຊ່ວຍໃຫ້ຄົນເຮົາເບິ່ງ

ງາມຂຶ້ນ, ແຕ່ກໍບໍ່ຈຳເປັນຕ້ອງຊື້ເຄື່ອງໃໝ່ລາຄາແພງໆມານຸ່ງຢູ່ຕະຫຼອດເວລາ ພໍພຽງແຕ່ນຸ່ງເຄື່ອງທີ່ສະອາດ ແລະ ເຂົ້າກັບສະພາບຄວາມເປັນຈິງຂອງຕົນໃນສັງຄົມເທົ່ານີ້ກໍງາມແລ້ວ. ນອກຈາກນີ້ແບບເຜີຍແຜ່ ຄຳສຸພາສິດຍັງສື່ໃຫ້ເຫັນຈາກຮູບພາບທີ່ໃຫ້ຄະຕິສອນໃຈດັ່ງນີ້:

"ຢ່າປີ້ງຊີ້ນໃກ້ໝາ ຢ່າປີ້ງປາໃກ້ແມວ"



**ຮູບພາບທີ 5: ຮູບລາຍເສັ້ນລາປະກອບຄຳສຸພາສິດ (ຄ.ລ:58)**

ຈາກສຸພາສິດຂ້າງເທິງນັ້ນສະແດງໃຫ້ເຫັນເຖິງ ແບບເຜີຍແຜ່ຄຳສຸພາສິດປະກອບລາຍເສັ້ນສຳຫຼັບເດັກ. ໃນຮູບພາບປາກົດເຫັນໄກ່ບໍ່ມີຂົນຕົວໜຶ່ງກຳລັງອາຍໄກ່ສອງຕົວທີ່ມີຂົນງາມເບິ່ງຕົນເອງຢູ່ ເຊິ່ງຮູບພາບດັ່ງກ່າວນີ້ເຫັນຄຳສຸພາສິດທີ່ວ່າ "ຢ່າປີ້ງຊີ້ນໄກໝາ ຢ່າປີ້ງປາໄກແມວ" ຈາກຄຳສຸພາສິດມີເນື້ອໃນເວົ້າເຖິງການກະທຳສິ່ງໃດໜຶ່ງລົງໄປຄວນຄຳນຶງເຖິງຜົນສະທ້ອນທີ່ຕາມມາ. ສະນັ້ນ, ສັງເກດຮູບແບບເຜີຍແຜ່ຄຳສຸພາສິດໃນແບບເຜີຍແຜ່ດ້ວຍຮູບພາບລາຍເສັ້ນຊ່ວຍເສີມສ້າງພັດທະນາການສະ ໝອງຂອງເດັກ. ຈິນຕະນາການ ແລະ ເປັນການສ້າງກິດຈະກຳຢ່າງໜຶ່ງໃຫ້ກັບການຮຽນຂອງເດັກ ຄື ໄດ້ລະບາຍສີໃສ່ຮູບຕ່າງໆທີ່ປະກອບໃນຄຳສຸພາສິດນັ້ນແລ້ວຍັງໃຫ້ຄະຕິສອນໃຈໃຫ້ແກ່ເດັກອີກດ້ວຍ. ດັ່ງນັ້ນ, ຮູບແບບການການເຜີຍແຜ່ຄຳສຸພາສິດແບບຮູບພາບລາຍເສັ້ນປະກອບເປັນຄະຕິສອນໃຫ້ຮູ້ເລື່ອງການກະທຳຂອງຄົນຄວນຄຳນຶງເຖິງຜົນຕາມມາ.

### 3.1.4 ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ

ແບບເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ ໝາຍເຖິງການເຜີຍແຜ່ຄຳສຸພາສິດດ້ວຍການວິເຄາະຄວາມໝາຍຫຼືຕີຄວາມໝາຍຄຳສຸພາສິດຕ່າງໆ ທີ່ເອົາລົງໃນໜັງສືພິມວາລະສານຕາມແຕ່ຄໍລຳເພື່ອໃຫ້ຜູ້ອ່ານໄດ້ຮັບຮູ້ຄຳສຸພາສິດແລ້ວຍັງເຂົ້າໃນເນື້ອໃນຄວາມໝາຍຂອງຄຳສຸພາສິດອີກດ້ວຍ. ພົບຫຼາຍແມ່ນໜັງສືພິມວັນນະສິນທີ່ມີຄໍລຳສຸພາສິດທີ່ໃຫ້ຄະຕິສອນໃຈໃນການດຳລົງຊີວິດແກ່ຜູ້ອ່ານ. ຈາກການສຶກສາພົບຮູບແບບເຜີຍແຜ່ສຸພາສິດໃນໜັງສືພິມວັນນະສິນ ເຊິ່ງລາຍລະອຽດສະແດງອອກດັ່ງຄຳສຸພາສິດໃນຮູບພາບຕໍ່ໄປນີ້:




**ຮູບພາບທີ 6: ແບບເຜີຍແຜ່ຄຳສຸພາສິດຈາກວາລະສານວັນນະສິນ**

ຈາກຄຳສຸພາສິດຂ້າງເທິງນັ້ນສະແດງໃຫ້ເຫັນ ຮູບແບບເຜີຍແຜ່ຄຳສຸພາສິດໃນໜັງສືພິມວາລະສານວັນນະສິນ, ປີທີ 29, ປະຈຳເດືອນພະຈິກ ປີ 2008 ໜ້າ 27. ສັງເກດເຫັນວ່າໃນຄໍລຳວາລະສານວັນນະສິນມີຄຳສຸພາສິດທີ່ວ່າ "ໄມ້ແກ່ກາຍເບັດ ເຫັດແກ່ກາຍຍາມແກງ" ເປັນຄະຕິສອນໃຫ້ຮູ້ເລື່ອງການສັ່ງສອນລູກຕ້ອງບອກສອນແຕ່ຍາມຍັງນ້ອຍໄປ. ຖ້າໃຫຍ່ຂຶ້ນມາແລ້ວບອກສອນເທື່ອດຽວແມ່ນເປັນໄປບໍ່ໄດ້. ນອກຈາກນີ້ການສຶກສາຍັງພົບຮູບແບບເຜີຍແຜ່ຄຳສຸພາສິດຍັງສື່ໃຫ້ເຫັນຈາກຄໍລຳສຸພາສິດທີ່ໃຫ້ຄະຕິສອນໃຈດັ່ງຄຳສຸພາສິດທີ່ສະແດງອອກໃນຮູບພາບລຸ່ມນີ້:




**ຮູບພາບທີ 7: ແບບເຜີຍແຜ່ຄຳສຸພາສິດຈາກວາລະສານວັນນະສິນ**

ຈາກຕົວຢ່າງແບບເຜີຍແຜ່ຄຳສຸພາສິດ"ເສນາໝາກຂີ້ກາ"ໃນໜັງສືພິມວາລະສານວັນນະສິນຂ້າງເທິງນັ້ນ, ສອນໃຫ້ຮູ້ຄົນທີ່ບໍ່ມີຄວາມຄິດເປັນຂອງຕົນເອງມີແຕ່ເລີຍຕາມຄົນອື່ນ ຄົນແບບນີ້ບໍ່ມີຫຍັງທີ່ຈະພາກພູມໃຈເພາະຖ້າໝູ່ພາຜິດກໍ່ຜິດນຳ ໝູ່ພາຖືກກໍຖືກນຳ. ສຸພາສິດນີ້ໃຫ້ຄະຕິວ່າເປັນຄົນຕ້ອງມີຫຼັກໝັ້ນມີຫົວຄິດປັນຍາເປັນຂອງຕົນເອງ.

ເວົ້າລວມແລ້ວ ຮູບແບບເຜີຍແຜ່ຄຳສຸພາສິດໃນໜັງສືພິມວາລະສານວັນນະສິນ ພົບຮູບແບບນຳສະເໜີດ້ວຍການຕີຄວາມຄຳສຸພາສິດ ທີ່ເປັນຄຳລຳບົດຄຳສຸພາສິດໃນໜ້າໜັງສືພິມທີ່ໃຫ້ຄະຕິສອນຄົນເລື່ອງການສັ່ງສອນລູກຕ້ອງບອກສອນແຕ່ຍາມຍັງນ້ອຍໄປ, ຄົນເຮົານອກຈາກງາມທັງກາຍແລ້ວຕ້ອງງາມທັງໃຈ, ເປັນຄົນຕ້ອງມີຫຼັກໝັ້ນ ແລະການຕັດສິນໃຈທຸກສິ່ງຢ່າງຂຶ້ນກັບຕົວເຮົາ.

## 4. ວິພາກຜົນ

ຈາກການສຶກສາຄົ້ນຄວ້າຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນພົບ 4 ຮູບແບບຄື ແບບຂຽນຄຳສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບລາຍເສັ້ນ, ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ. ໃນນັ້ນ, ແບບຂຽນຄຳສຸພາສິດປະກອບຮູບພາບ ພົບແບບເຜີຍແຜ່ສຸພາສິດດ້ວຍການປະກອບຮູບພາບປຽບທຽບ; ແບບສຸພາສິດປະກອບຮູບພາບ ພົບການເຜີຍແຜ່ຮູບແບບຄຳສຸພາສິປະກອບຮູບພາບປຽບທຽບທີ່ເປັນຄະຕິເຕືອນໃຈໃນການດຳລົງຊີວິດ; ແບບສຸພາສິດປະກອບລາຍເສັ້ນ ພົບແບບເຜີຍແຜ່ດ້ວຍຮູບພາບລາຍເສັ້ນຊ່ວຍເສີມສ້າງພັດທະນາການທາງມັນສະໝອງຂອງເດັກ; ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ ພົບຮູບແບບນຳສະເໜີດ້ວຍການຕີຄວາມຄຳສຸພາສິດ ທີ່ເປັນຄຳລຳບົດຄຳສຸພາສິດໃນໜ້າໜັງສືພິມ.

ການຄົ້ນຄວ້າຄັ້ງນີ້ ມີຄວາມຄ້າຍຄືກັບບົດຄົ້ນຄວ້າຂອງ Li Lingling (2014) ໄດ້ສຶກສາໃນຫົວຂໍ້ຄຳສຸພາສິດພື້ນເມືອງຈີນໂດຍມີຈຸດປະສົງ ເພື່ອການເຜີຍແຜ່ຄຳສຸພາສິດພື້ນເມືອງພື້ນເມືອງຈີນ. ຜົນການສຶກສາພົບວ່າ ຄຳສຸພາສິດເຜີຍແຜ່ຢ່າງກວ້າງຂວາງໃນທີ່ສາທາລະນະ ເຊັ່ນ: ໂຮງຮຽນ, ສວນສາທາລະນະ, ວັດ, ຄຸກ ແລະ ການເຜີຍແຜ່ທາງສື່ອອນລາຍທຸກຮູບແບບ ເຊັ່ນ ໂທລະພາບ, ວິທະຍຸ, ໜັງສືພິມ. ສ່ວນບົດຄົ້ນຄວ້າຮູບແບບການເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນຄັ້ງນີ້ ແມ່ນມີຄວາມແຕກຕ່າງກັນຫຼາຍເພາະວ່າບົດຄົ້ນຄວ້າໄດ້ວາງຈຸດປະສົງຕ່າງກັນຄື ຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ແລະ ຖານຂໍ້ມູນກໍຕ່າງກັນ ຄື ການສຶກສາຄັ້ງນີ້ຂໍ້ມູນແມ່ນປຶ້ມແບບຮຽນປັດຈຸບັນ ຂອງກະຊວງສຶກສາທິການ ແລະກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເຊັ່ນ: ປຶ້ມແບບຮຽນວັນນະຄະດີຊັ້ນມັດທະຍົມປີທີ 1 ແລະ ປຶ້ມແບບຮຽນວັນນະຄະດີຊັ້ນມັດທະຍົມປີທີ 5, ປຶ້ມອ່ານທົ່ວໄປ 10 ເຫຼັ້ມ, ໜັງສືພິມ ແລະໂທລະພາບ. ເຊິ່ງບໍ່ທັນໄດ້ມີນັກຄົ້ນຄວ້າທ່ານໃດໄດ້ລົງເລິກກ່ຽວກັບສຸພາສິດໃນສັງຄົມລາວປັດຈຸບັນດັ່ງກ່າວນີ້.

## 5. ສະຫຼຸບ

ບົດຄວາມສະບັບນີ້ ເປັນການສຶກສາຮູບແບບການເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ໂດຍມີຈຸດປະສົງວິເຄາະຮູບແບບການເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນ ເປັນແນວທາງໃນການສຶກສາຄົ້ນຄວ້າ ສາມາດວິເຄາະຮູບແບບເຜີຍແຜ່ຄຳສຸພາສິດໃນສັງຄົມລາວປັດຈຸບັນອອກເປັນ 4 ຮູບແບບຄື ແບບຂຽນຄຳສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບຮູບພາບ, ແບບສຸພາສິດປະກອບລາຍເສັ້ນ, ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ. ໃນນັ້ນ, ແບບຂຽນຄຳສຸພາສິດປະກອບຮູບພາບ ພົບແບບເຜີຍແຜ່ສຸພາສິດດ້ວຍການປະກອບຮູບພາບປຽບທຽບ; ແບບສຸພາສິດປະກອບຮູບພາບ ພົບການເຜີຍແຜ່ຮູບແບບຄຳສຸພາສິປະກອບຮູບພາບປຽບທຽບທີ່ເປັນຄະຕິເຕືອນໃຈໃນການດຳລົງຊີວິດ; ແບບສຸພາສິດປະກອບລາຍເສັ້ນ ພົບແບບເຜີຍແຜ່ດ້ວຍຮູບພາບລາຍເສັ້ນຊ່ວຍເສີມສ້າງພັດທະນາການທາງມັນສະໝອງຂອງເດັກ; ແບບນຳເຜີຍແຜ່ດ້ວຍການຕີຄວາມຄຳສຸພາສິດ ພົບຮູບແບບນຳສະເໜີດ້ວຍການຕີຄວາມຄຳສຸພາສິດ ທີ່ເປັນຄຳລຳບົດຄຳສຸພາສິດໃນໜ້າໜັງສືພິມ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນເອງວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການບົດນີ້ແມ່ນບໍ່ມີຄວາມຂັດແຍ່ງກັບພາກສ່ວນໃດ, ກໍລະນີມີການ

ລະເມີດໃນຮູບແບບໃດກໍຕາມຂ້າພະເຈົ້າຍິນດີທີ່ຈະຮັບຜິດຊອບຜູ້ດຽວ.

## 7. ເອກະສານອ້າງອີງ


Onkeo NUANANONG with the board (2005) Academic year 5 Literature's Textbook, Printed at Public Printing

Kanlaya SOUKSAVATH with the board (2015). Study Korea proverbs with meanings corresponding to Lao proverbs. The thesis of faculty of Letter, National University.

Khaophone XAYYALATH with the board (2015) study the contents of proverb and idioms the thesis of faculty of Letter, National University

Khamphouy PHONLUEXA & Phuangseng KEOKHOUNBORISAK (2010) Academic year 1 Literature's Textbook, Printed at Public Printing

Chanh INTHOUPHILAS (1986) Ancient Lao proverbs and Expression, 1st Printed at SAMNUKSONG THAMANAPHARB Printing

Chanh INTHOUPHILAS (1986) Chanthaphasith, 1st Printed at SAMNUKSONG THAMANAPHARB Printing

Souk KHUONPASERT with the board (2012). Study the contents of some aspect of Lao proverbs The thesis of faculty of Letter, National University

Duangchanh VANHNABOUPPHA (1991). Pronouns and idioms. Printed and book distributing by Public Printing.

Bouaphone MALAIKHAM (2012). Compared Lao proverbs and Vietnamese proverbs. Faculty of Letter, National University

Bounlome SIBOUNHUENG with the board (2014). Academic year 5 Literature's Text Book, Printed at Public educational Printing

Mahashila VILAVONGS (1996). Ancient of Lao proverb. Published by Vanhnasin Magazine, Association of child's book Promoting.

Mahashila VILAVONGS (2000). Ancient of Lao proverb. Published by Vanhnasin Magazine, Association of child's book Promoting

Mithong SOUVANVIXAY with the board (2008). Academic year 1 Lao Language-Literature Textbook, Printed at Public Educational Printing

Vanhnalin SOUKLUEXAY with the board (2015), Study the ancient of Lao proverbs and Vietnamese proverbs, The thesis of Faculty of Letters, National University.

Phuangsaba (1994) the ancient proverbs with the explanations and picture to remind, Published by Vanhnasin Magazine, Association of child's book Promoting of Japan

Onsy Pasavong (2007) A word of association behavior, Published by Wanhchai Printing, 3rd Printed

Ounla SANTI (2007). Traditional Lao Proverbs, published by 1st Printed at Luangprabang Big brother mouse.

Phoutsadee CHATHASONE with the board (2011) Study Lao proverb and analyze Lao proverb that teach ladies. Thesis of faculty of Letter, National University.

Phimpho LUANGLARD and the board (2016). Research Skills, Published by Department of Higher Education, Ministry of Education and Sport.

Herjuehan. Linguistic Memes Theory and Application. (2014). Jinan University.

Li Ling ling. (2014). Introduction to Communication: Second Edition [M]. Zhengzhou University Press, 2014